ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 29 ກໍລະກົດ ຫາ 02 ສິງຫາ 2024




ກອງປະຊຸມເຜີຍແຜ່ ກົດໝາຍ ວ່າດ້ວຍສັດປ່າ (ສະບັບປັບປຸງ)

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍສັດປ່າ (ສະບັບປັບປຸງ)

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 18 ກໍລະກົດ 2024 ນີ້, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ຮ່ວມກັບ ກົມກົດໝາຍ, ກະຊວງຍຸຕິທຳ ໄດ້ຈັດກອງປະຊຸມ ເຜີຍແຜ່ ກົດໝາຍ ວ່າດ້ວຍສັດປ່າ (ສະບັບປັບປຸງ) ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023 ຂຶ້ນ, ທີ່ຫ້ອງປະຊຸມ ພັດຕະຄານ ແລະ ສວນອາຫານ ຊົມວິວ ເມືອງວັງວຽງ, ແຂວງວຽງຈັນ. ຊຶ່ງໄດ້ຮັບການສະໜັບໜູນຂອງ ອົງການ UNODC ໂດຍການເປັນປະທານຂອງ ທ່ານ ສົມບູນ ວົງພະຈັນ ຮອງຫົວໜ້າກົມກົດໝາຍ, ກະຊວງຍຸຕິທຳ. ມີບັນດາຜູ້ຕາງໜ້າຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ 5 ແຂວງພາກກາງ (ແຂວງ ຊຽງຂວາງ, ໄຊສົມບູນ, ແຂວງ ວຽງຈັນ, ແຂວງ ບໍລິຄຳໄຊ ແລະ ນະຄອນຫຼວງວຽງຈັນ), ພ້ອມນີ້ມີພາກສ່ວນທີ່ກ່ຽວຂ້ອງ ຂອງທັງສອງກະຊວງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມ ເພື່ອໂຄສະນາ ເຜີຍແຜ່ ກົດໝາຍ ວ່າດ້ວຍສັດປ່າ (ສະບັບປັບປຸງ) ແລະ ດຳລັດ ວ່າດ້ວຍການຄຸ້ມຄອງ ການຄ້າຂາຍສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ສະບັບເລກທີ 299/ລບ, ລົງວັນທີ 05 ມິຖຸນາ 2024 ແລະ ປະມວນກົດໝາຍອາຍາ ທີ່ກ່ຽວຂ້ອງ ກັບການລັກລອບ ຄ້າ-ຂາຍ ສັດປ່າ ແລະ ພືດປ່າ ລວມທັງເປັນແນວທາງໃນການຈັດຕັ້ງປະຕິບັດໃຫ້ຖືກຕາມລະບຽບການ, ເພື່ອເປັນບ່ອນອີງໃນການດຳເນີນຄະດີຕໍ່ຜູ້ກະທຳຜິດ ແລະ ລະເມີດ

ກົດໝາຍສະບັບດັ່ງກ່າວນີ້. ໃນທີ່ປະຊຸມ ໄດ້ຮັບຟັງການເຜີຍແຜ່ ກ່ຽວກັບ: ກົດໝາຍວ່າດ້ວຍສັດປ່າ ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023 ຊຶ່ງໃຫ້ກຽດເຜີຍແຜ່ໂດຍ ທ່ານ ສົມບູນ ວົງພະຈັນ ຮອງຫົວໜ້າກົມກົດໝາຍ, ກະຊວງຍຸຕິທຳ ແລະ ໃນຕອນບ່າຍ ກອງປະຊຸມໄດ້ສືບຕໍ່ ໂດຍການເປັນປະທານ ຂອງທ່ານ ປອ. ສຸນັນທາ ຈຸນລະມະນີ ຮອງຫົວໜ້າກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ພ້ອມທັງໃຫ້ກຽດບັນຍາຍ ປະມວນກົດໝາຍອາຍາ ທີ່ກ່ຽວຂ້ອງ ກັບການລັກລອບຄ້າ-ຂາຍ ສັດປ່າ ແລະ ພືດປ່າ. ຫຼັງຈາກນັ້ນ, ໃນທີ່ປະຊຸມ ໄດ້ມີການສົນທະນາ ແລະ ແລກປ່ຽນຄວາມຄິດເຫັນຢ່າງກົງໄປກົງມາ ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດ ກົດໝາຍ ສະບັບດັ່ງກ່າວ ໃຫ້ໄດ້ຮັບປະສິດທິຜົນໃນຕໍ່ໜ້າ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;